| ຂໍ້ມູນທີ່ໄດ້ຮັບຈາກຂະແໜງການທີ່ກ່ຽວຂ້ອງ | |
|---|---|
| ຊື່ໃບອະນຸຍາດ | ໃບອະນຸຍາດດໍາເນີນກິດຈະການກະສິກໍາ ແລະ ປ່າໄມ້ |
| **ປະເພດເອກະສານ** | ໃບອະນຸຍາດດໍາເນີນທຸລະກິດ |
| **ວັນທີແກ້ໄຂຂໍ້ມູນລ່າສຸດ** | 23.02.2024 |
| **ພາກສ່ວນຮັບຜິດຊອບ** | ກົມແຜນການ ແລະ ການຮ່ວມມື |
| **ຜູ້ທີ່ສາມາດຍື່ນຂໍເອກະສານ** | ບໍລິສັດ ຫຼື ວິສາຫະກິດ ທີ່ຂຶ້ນທະບຽນວິສາຫະກິດໂກຕ້ອງຕາມກົດໝາຍ ໂດຍຜ່ານ ກະຊວງອຸດສາຫະກໍາ ແລະ ການຄ້າ |

| | |
|---|---|
| **ເງື່ອນໄຂໃນການຂໍເອກະສານ** | I. ສໍາລັບການລົງທຶນ ໃນກິດຈະການ ການລົງທຶນທົ່ວໄປ “ ກິດຈະການ ບໍ່ຢູ່ໃນບັນຊີຄວບຄຸມ “ 1. ໃບຄໍາຮ້ອງຂໍໃບອະນຸຍາດດໍາເນີນທຸລະກິດກະສິກໍາ ແລະ ປ່າໄມ້ (ພ້ອມດ້ວຍຮູບຂະໜາດ 3x4 ຈໍານວນ 02 ໃບ ຄັດຕິດມາພ້ອມ) ຕາມແບບຟອມ ກົມແຜນການ ແລະ ການຮ່ວມມື, ກະຊວງກະສິກໍາ ແລະ ປ່າໄມ້;2. ໃບທະບຽນວິສາຫະກິດ;3. ກົດລະບຽບຂອງບໍລິສັດ (ທີ່ໄດ້ຮັບການອະນຸມັດຢັ້ງຢືນຖືກຕ້ອງຄົບຖ້ວນແລ້ວ);4. ບົດວິພາກເສດຖະກິດ-ເຕັກນິກໂຄງການ/ບົດສະເໜີໂຄງການ ຫຼື ແຜນການເຄື່ອນໄຫວດໍາເນີນທຸລະກິດ ສໍາລັບກິດ ຈະການເຄື່ອນໄຫວດ້ານບໍລິການທີ່ປຶກສາ ແລະ ບໍລິການການຄ້າ ຂາອອກ-ຂາເຂົ້າທົ່ວໄປ ເພື່ອຈໍາໜ່າຍ.II. ສໍາລັບການລົງທຶນ ໃນບັນຊີກິດຈະການຄວບຄຸມ1. ໃບຄໍາຮ້ອງ ຂໍໃບອະນຸຍາດດໍາເນີນທຸລະກິດກະສິກໍາ ແລະ ປ່າໄມ້ (ພ້ອມດ້ວຍຮູບຂະໜາດ 3x4 ຈໍານວນ 02 ໃບ ຄັດຕິດມາພ້ອມ) ຕາມແບບຟອມຄໍາຮ້ອງ ກົມແຜນການ ແລະ ການຮ່ວມມື, ກະຊວງກະສິກໍາ ແລະ ປ່າໄມ້.2. ໃບອະນຸຍາດລົງທຶນ.3. ໃບທະບຽນວິສາຫະກິດ. 4. ໃບຢັ້ງຢືນທີ່ດິນ ແລະ/ຫຼື ສັນຍາສົ່ງເສີມ ໃນຮູບແບບ 2+3 (ທີ່ໄດ້ຮັບການອະນຸມັດຢັ້ງຢືນຖືກຕ້ອງຄົບຖ້ວນແລ້ວ).5. ບົດວິພາກເສດຖະກິດ-ເຕັກນິກ ໂຄງການ ແລະ ລວມທັງໃບຢັ້ງຢືນຮັບຮອງ (ທີ່ໄດ້ຮັບການອະນຸມັດຢັ້ງຢືນກຕ້ອງຄົບຖ້ວນແລ້ວ).6. ບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມທໍາມະຊາດ ແລະ ສັງຄົມ (ESIA) ຫຼື ບົດລາຍງານການສຶກສາເບື້ອງຕົ້ນກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ (IEE); ຫຼື ສ້າງແຜນການຄຸ້ມຄອງແລະຕິດຕາມກວດກາດ້ານສິ່ງແວດລ້ອມ (EMMP) ຫຼື ແຜນການຄຸ້ມຄອງແລະຕິດຕາກວດກາດ້ານສັງຄົມ (SMMP) (ທີ່ໄດ້ຮັບການອະນຸມັດຢັ້ງຢືນຮັບຮອງທຶກຕ້ອງຄົບຖ້ວນ ຈາກ ຂະແໜງການຊັບພະຍາກອນ ທໍາມະຊາດ ແລະ ສິ່ງແວດລ້ອມ ແລ້ວ).III. ສໍາລັບການລົງທຶນ ໃນກິດຈະການບັນຊີສໍາປະທານ1. ໃບຄໍາຮ້ອງ ຂໍໃບອະນຸຍາດດໍາເນີນທຸລະກິດກະສິກໍາ ແລະ ປ່າໄມ້ (ພ້ອມດ້ວຍຮູບຂະໜາດ 3x4 ຈໍານວນ 02 ໃບ ຄັດຕິດມາພ້ອມ) ຕາມແບບຟອມຄໍາຮ້ອງ ກົມແຜນການ ແລະ ການຮ່ວມມື, ກະຊວງກະສິກໍາ ແລະ ປ່າໄມ້.2. ໃບອະນຸຍາດລົງທຶນ.3. ໃບທະບຽນວິສາຫະກິດ. 4. ສັນຍາວ່າດ້ວຍການພັດທະນາໂຄງການ PDA/ສັນຍາສໍາປະທານກັບລັດຖະບານ CA, (ທີ່ໄດ້ຮັບການອະນຸມັດຢັ້ງຢືນຖືກຕ້ອງຄົບຖ້ວນແລ້ວ).5. ສັນຍາເຊົ່າ ແລະ ສໍາປະທານທີ່ດິນລັດ ຮູບແບບ 1+4 ລວມທັງບົດສໍາຫຼວດເນື້ອທີ່ດິນ ຫຼື ໃບຢັ້ງຢືນທີ່ດິນ ແລະ/ຫຼື ສັນຍາສົ່ງເສີມ ໃນຮູບແບບ 2+3 (ທີ່ໄດ້ຮັບການອະນຸມັດຢັ້ງຢືນຖືກຕ້ອງຄົບຖ້ວນແລ້ວ).6. ບົດວິພາກເສດຖະກິດ-ເຕັກນິກ ໂຄງການ ແລະ ລວມທັງໃບຢັ້ງຢືນຮັບຮອງ (ທີ່ໄດ້ຮັບການອະນຸມັດຢັ້ງຢືນຖືກຕ້ອງຄົບຖ້ວນແລ້ວ).7. ບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມທໍາມະຊາດ ແລະ ສັງຄົມ (ESIA) ຫຼື ບົດລາຍງານການສຶກສາເບື້ອງຕົ້ນກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ (IEE); ຫຼື ສ້າງແຜນການຄຸ້ມຄອງແລະຕິດຕາມກວດກາດ້ານສິ່ງແວດ ລ້ອມ (EMMP) ຫຼື ແຜນການຄຸ້ມຄອງແລະຕິດຕາກວດກາດ້ານສັງຄົມ (SMMP), ທີ່ໄດ້ຮັບການອະນຸມັດຢັ້ງຢືນຮັບຮອງຖືກຕ້ອງຄົບຖ້ວນ ຈາກ ຂະແໜງການຊັບພະຍາກອນ ທໍາມະຊາດ ແລະ ສິ່ງແວດລ້ອມ ແລ້ວ. |

## ກົດໝາຍ ແລະ ນິຕິກຳອື່ນໆ ທີ່ກ່ຽວຂ້ອງ

| ຊື່ | ເລກທີ | ລົງວັນທີ | ໝາຍເຫດ |
|---|---|---|---|
| ກົດໝາຍ ວ່າດ້ວຍສັດນ້ຳ ແລະ ການປະມົງ (ສະບັບປັບປຸງ) | ສພຊ | 17.07.2023 | |
| ກົດໝາຍ ວ່າດ້ວຍການລ້ຽງສັດ ແລະ ສັດຕະວະແພດ (ສະບັບປັບປຸງ) | ສພຊ | 11.11.2016 | |
| ກົດໝາຍວ່າດ້ວຍ ການປະມົງ | 03/ສພຊ | 07.09.2009 | |
| ຂໍ້ຕົກລົງ ວ່າດ້ວຍ ກົນໄກຄຸ້ມຄອງການລົງທຶນ ໃນຂະແໜງກະສິກຳ ແລະ ປ່າໄມ້ | ກປ | 26.10.2022 | |
| ກົດໝາຍ ວ່າດ້ວຍປ່າໄມ້ (ສະບັບປັບປຸງ) | ສພຊ | 13.06.2019 | |

| ໃບອະນຸຍາດດຳເນີນການ ຫລື ເອກະສານທີ່ຈຳເປັນ ຫລື ຕິດພັນ | | |
|---|---|---|
| **ຊື່** | **ປະເພດ** | **ໝາຍເຫດ** |
| ${SUPPORT_NAME} | ${SUPPORT_TYPE} | ${SUPPORT_COMMENT} |

| ເອກະສານທີ່ຕ້ອງປະກອບສຳລັບການຍື່ນຂໍເອກະສານ | | |
|---|---|---|
| **ຊື່ເອກະສານ** | **ປະເພດເອກະສານ** | **ຕົວຢ່າງເອກະສານ** |
| ${ATTACHMENT_NAME} | ${ATTACHMENT_TYPE} | ${ATTACHMENT_FILE} |

| ເອກະສານທີ່ຕ້ອງປະກອບສຳລັບການຕໍ່ອາຍຸ | | |
|---|---|---|
| ຊື່ເອກະສານ | ປະເພດເອກະສານ | ຕົວຢ່າງເອກະສານ |
| ${ATTACHMENT_NAME_RENEW} | ${ATTACHMENT_TYPE_RENEW} | ${ATTACHMENT_FILE_RENEW} |

| ຮູບແບບການຍື່ນເອກະສານ | | |
|---|---|---|
| **ການຍື່ນເອກະສານ** | ຢູ່ທີ່ຫ້ອງການເຈົ້າໜ້າທີ່ | |
| **ທີ່ຢູ່ຂອງພາກສ່ວນທີ່ຮັບຜິດຊອບ** | ກົມແຜນການ ແລະ ການຮ່ວມມື, ກະຊວງກະສິກຳ ແລະ ປ່າໄມ້ | |
| **ໄລຍະເວລາໃນການ ພິຈາລະນາຄຳຮ້ອງ (ວັນ)** | 5 | ຍື່ນເອກະສານມາຍັງ ກົມແຜນການ ແລະ ການຮ່ວມມື, ກະຊວງກະສິກຳ ແລະ ປ່າໄມ້ |

| ການຕໍ່ອາຍຸເອກະສານ | |
|---|---|
| **ເອກະສານມີກຳນົດອາຍຸ ຫຼື ບໍ່?** | **ໃບອະນຸຍາດມີອາຍຸການນຳໃຊ້ຈັກເດືອນ?** |
| ມີ | 12 |
| **ຂັ້ນຕອນ ແລະ ເງື່ອນໄຂສຳລັບການຕໍ່ອາຍຸເອກະສານ** | |

| | |
|---|---|
| **ຂັ້ນຕອນ ແລະ ເງື່ອນໄຂສຳລັບການຕໍ່ອາຍຸໃບອະນຸຍາດ** | I. ສຳລັບການລົງທຶນ ໃນກິດຈະການ ການລົງທຶນທົ່ວໄປ “ ກິດຈະການ ບໍ່ຢູ່ໃນບັນຊີຄວບຄຸມ “ 1. ໃບຄຳຮ້ອງ ຂໍຕໍ່ໃບອະນຸຍາດດຳເນີນທຸລະກິດກະສິກຳ ແລະ ປ່າໄມ້ (ພ້ອມດ້ວຍຮູບຂະໜາດ 3x4 ຈຳນວນ 02 ໃບ) ຕາມແບບຟອມຄຳຮ້ອງ ກົມແຜນການ ແລະ ການຮ່ວມມື, ກະຊວງກະສິກຳ ແລະ ປ່າໄມ້;2. ບົດສະຫຼຸບການເຄື່ອນໄຫວດຳເນີນກິດຈະການໃນປີຜ່ານມາ (ຕາມຮ່າງບົດສະຫຼຸບລາຍງານ ຂອງກົມແຜນການ ແລະ ການຮ່ວມມື, ກະສິກຳ ແລະ ປ່າໄມ້ ໂດຍມີການຢັ້ງຢືນຮັບຮູ ຈາກພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ, ນະຄອນຫຼວງ ແລະ ຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ ທີ່ກ່ຽວຂ້ອງ);3. ໃບທະບຽນວິສາຫະກິດ;4. ໃບທະບຽນອາກອນ ຫຼື ໃບຢັ້ງຢືນການມອບພັນທະເສຍອາກອນ;5. ໃບອະນຸຍາດດຳເນີນກິດຈະການກະສິກຳ ແລະ ປ່າໄມ້ (ປີຜ່ານມາ).ໝາຍເຫດ: 1. ໃນກໍລະນີບໍລິສັດໄດ້ໄປເຄື່ອນໄຫວກິດຈະການຢູ່ຫຼາຍແຂວງ ແມ່ນໃຫ້ເຮັດບົດສະຫຼຸບສະເພາະຂອງແຕ່ລະແຂວງ ໂດຍຜ່ານການຢັ້ງຢືນຮັບຮູ້ຢ່າງຖືກຕ້ອງ ຈາກ ຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ ແລະ ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ, ນະຄອນຫຼວງ ທີ່ກ່ຽວຂ້ອງ ບ່ອນທີ່ໄດ້ມີການດຳເນີນກິດຈະ ການໂຄງການນັ້ນ; ສຳລັບກິດຈະການເຄື່ອນໄຫວດ້ານບໍລິການທີ່ປຶກສາ ແລະ ບໍລິການການຄ້າຂາອອກ-ຂາເຂົ້າທົ່ວໄປເພື່ອຈຳໜ່າຍ ແມ່ນບໍ່ໄດ້ເຊັນຢັ້ງຢືນຮັບຮູ້ຈາກ ຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ ແລະ ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ (ແມ່ນໃຫ້ຄັດຕິດເອກະສານທີ່ກ່ຽວຂ້ອງຄົບຖ້ວນ ໃນການນຳເຂົ້າ-ສົ່ງອອກ ມາພ້ອມ).2. ໃນກໍລະນີບໍ່ມີບົດສະຫຼຸບລາຍງານການເຄື່ອນໄຫວດຳເນີນກິດຈະການໃນປີຜ່ານມາ ແລະ ບໍ່ມີການຢັ້ງຢືນຮັບຮູ້ຈາກ ຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ, ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ, ນະຄອນຫຼວງ ທີ່ກ່ຽວຂ້ອງ. ກົມແຜນການ ແລະ ການຮ່ວມມື ກະຊວງກະສິກຳ ແລະ ປ່າໄມ້ ຕ້ອງສົມທົບກັບ ກົມ, ພາກສ່ວນທີ່ກ່ຽວຂ້ອງຢູ່ທ້ອງຖິ່ນ ແລະ ບໍລິສັດ ເພື່ອພ້ອມກັນລົງເກັບກຳຂໍ້ມູນ ຕິດຕາມ ກວດກາ ການເຄື່ອນໄຫວດຳເນີນກິດຈະການຕົວຈິງແລ້ວ ສ້າງບົດບັນທຶກຮ່ວມກັນ ໂດຍມີການຢັ້ງຢືນຢ່າງຖືກຕ້ອງ ເພື່ອໃຊ້ເປັນບ່ອນອີງ ນຳສະເໜີລາຍງານຂັ້ນເທິງໃນການພິຈາລະນາຕໍ່ໃບອະນຸຍາດ.II. ສຳລັບການລົງທຶນ ໃນບັນຊີກິດຈະການຄວບຄຸ້ມ1. ໃບຄຳຮ້ອງຂໍຕໍ່ໃບອະນຸຍາດດຳເນີນທຸລະກິດກະສິກຳ ແລະ ປ່າໄມ້ (ພ້ອມດ້ວຍຮູບຂະໜາດ 3x4 ຈຳນວນ 02 ໃບ) ຕາມແບບຟອມຄຳຮ້ອງ ກົມແຜນການ ແລະ ການຮ່ວມມື, ກະຊວງກະສິກຳ ແລະ ປ່າໄມ້.2. ບົດສະຫຼຸບລາຍງານການເຄື່ອນໄຫວດຳເນີນກິດຈະການໃນປີຜ່ານມາ (ຕາມຮ່າງບົດສະຫຼຸບລາຍງານ ກົມແຜນການ ແລະ ການຮ່ວມມື, ກະຊວງກະສິກຳ ແລະ ປ່າໄມ້ ໂດຍມີການຢັ້ງຢືນຮັບຮູ້ ຈາກ ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ, ນະຄອນຫຼວງ ແລະ ຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ ທີ່ກ່ຽວຂ້ອງ).3. ໃບຢັ້ງຢືນທີ່ດິນ ແລະ/ຫຼື ສັນຍາສົ່ງເສີມ ໃນຮູບແບບ 2+3, ທີ່ໄດ້ຮັບການອະນຸມັດຢັ້ງຢືນທີ່ຖືກຕ້ອງຄົບຖ້ວນແລ້ວ (ໃນກໍລະນີຖ້າມີການດັດແກ້ປັບປຸງ).4. ໃບອະນຸຍາດລົງທຶນ.5. ໃບທະບຽນວິສາຫະກິດ.6. ໃບທະບຽນອາກອນ ຫຼື ໃບຢັ້ງຢືນການມອບພັນທະເສຍອາກອນ.7. ໃບອະນຸຍາດດຳເນີນກິດຈະການກະສິກຳ ແລະ ປ່າໄມ້ (ປີຜ່ານມາ).ໝາຍເຫດ: 1). ໃນກໍລະນີບໍລິສັດໄດ້ໄປເຄື່ອນໄຫວກິດຈະການຢູ່ຫຼາຍແຂວງ ແມ່ນໃຫ້ເຮັດບົດສະຫຼຸບສະເພາະຂອງແຕ່ລະແຂວງ ໂດຍຜ່ານການຢັ້ງຢືນຮັບຮູ້ຈາກ ຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ ແລະ ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ, ນະຄອນຫຼວງ ບ່ອນທີ່ໄດ້ມີການດຳເນີນກິດຈະການໂຄງການນັ້ນ.2). ໃນກໍລະນີບໍລິສັດບໍ່ມີບົດສະຫຼຸບລາຍງານການເຄື່ອນໄຫວດຳເນີນກິດຈະການໃນປີຜ່ານມາ ແລະ ບໍ່ມີການຢັ້ງຢືນຮັບຮູ້ຈາກ ຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ, ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ, ນະຄອນຫຼວງ ທີ່ກ່ຽວຂ້ອງ. ກົມແຜນການ |

| **ຄ່າທໍານຽມສໍາລັບການຍື່ນຂໍເອກະສານ** | | | | |
|---|---|---|---|---|
| **ມີຄ່າໃບຄໍາຮ້ອງ ຫຼື ບໍ່?** | **ຄ່າບໍລິການ** | **ຄ່າທໍານຽມທາງວິຊາການ** | **ຄ່າແບບຟອມ ຄໍາຮ້ອງ** | **ຄ່າໃຊ້ຈ່າຍທັງໝົດ** |
| ມີ | 0.00 | 0.00 | 0.00 | 0.00 |
| **Comments** | The person responsible for calculating and collecting fees is the Budget Department, Ministry Office, Ministry of Agriculture and Forestry | | | |
| **ຄ່າບໍລິການເພີ່ມເຕີມ** | | | | |
| ລາຍການຄ່າໃຊ້ຈ່າຍອື່ນໆ | | | | |
| ບໍ່ມີ | 0.00 | 0.00 | 0.00 | 0.00 |
| **ຄໍາ ເຫັນຄ່າ ທໍາ ນຽມເພີ່ມເຕີມ** | | | | |

| **ຄ່າທໍານຽມສໍາລັບການຂໍຕໍ່ອາຍຸເອກະສານ** | | | | |
|---|---|---|---|---|
| **ມີຄ່າຕໍ່ອາຍຸເອກະສານ ຫຼື ບໍ່?** | **ຄ່າບໍລິການ** | **ຄ່າທໍານຽມທາງວິຊາການ** | **ຄ່າໃບຄໍາຮ້ອງ** | **ຄ່າໃຊ້ຈ່າຍທັງໝົດ** |
| ມີ | 0.00 | 0.00 | 0.00 | 0.00 |
| **ຄໍາເຫັນ** | ຜູ້ຮັບຊອບໃນການຄິດໄລ່ ແລະ ເກັບຄ່າທໍານຽມ ແມ່ນ ພະແນກງົບປະມານ, ຫ້ອງການກະຊວງ, ກະຊວງກະສິກໍາ ແລະ ປ່າໄມ້ | | | |
| ຄ່າໃຊ້ຈ່າຍອື່ນໆ | | | | |
| ລາຍການຄ່າໃຊ້ຈ່າຍອື່ນໆ | | | | |
| ບໍ່ມີ | 0.00 | 0.00 | 0.00 | 0.00 |
| **ຄໍາ ເຫັນກ່ຽວກັບຄ່າ ທໍາ ນຽມຕໍ່ອາຍຸເພີ່ມເຕີມ** | | | | |